ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0420 /ກງ

ນະຄອນຫຼວງວຽງຈັນ, ວັນທີ 14 FEB 2018

# ແຈ້ງການ

ເຖິງ: ບັນດາກະຊວງ, ອົງການລັດ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ.

ເລື່ອງ: ຂັ້ນຕອນການດໍາເນີນເອກະສານຂໍອະນຸມັດນໍາເຂົ້າສິນຄ້າເຄື່ອງຂອງ ແລະ ຍົກເວັ້ນພາສີ-ອາກອນນໍາເຂົ້າສໍາລັບໂຄງການທີ່ນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ.

- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 8 ພຶດສະພາ 2017;
- ອີງຕາມກົດໝາຍພາສີ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມກົດໝາຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມບົດບັນທຶກການມອບໂອນວຽກຢັ້ງຢືນການຍົກເວັ້ນພາສີ-ອາກອນ ສໍາລັບໂຄງການ/ແຜນງານ ທີ່ນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ລະຫວ່າງການເງິນຕ່າງປະເທດ ແລະຄຸ້ມຄອງໜີ້ສິນ ແລະ ກົມພາສີ ສະບັບລົງວັນທີ 2 ກຸມພາ 2018,

ເພື່ອຫຼຸດຜ່ອນຂັ້ນຕອນທີ່ຊໍ້າຊ້ອນໃນການດໍາເນີນເອກະສານພາຍໃນກະຊວງການເງິນ ແລະ ເປັນການອໍານວຍຄວາມສະດວກໃນການເດີນເອກະສານຂໍອະນຸມັດນໍາເຂົ້າສິນຄ້າເຄື່ອງຂອງ ແລະ ຍົກເວັ້ນພາສີ-ອາກອນນໍາເຂົ້າ ວັດຖຸ-ອຸປະກອນ, ເຄື່ອງມື, ພາຫະນະ ແລະ ອື່ນໆ ແບບຊົ່ວຄາວ ແລະ ຖາວອນ ສໍາລັບບັນດາໂຄງການ/ແຜນງານ ທີ່ນໍາໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ, ກະຊວງການເງິນ ຈຶ່ງຂໍແຈ້ງມາຍັງ ບັນດາກະຊວງ, ອົງການລັດ, ແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຊາບດັ່ງນີ້:

1. <u>ໂຄງການ ແລະ ແຜນງານ ທີ່ນໍາໃຊ້ທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ):</u> ທຶນ ຊກພ ປະກອບມີທຶນກູ້ຢືມເງື່ອນໄຂຜ່ອນຜັນ ແລະ ທຶນຊ່ວຍເຫຼືອລ້າ ໃຫ້ແກ່ ສປປ ລາວ ສໍາລັບການຈັດຕັ້ງປະຕິບັດໂຄງການ/ແຜນງານ ຫຼື ດຸ່ນງົບປະມານ ແລະ ທຶນຊ່ວຍເຫຼືອລ້າດ້ານວິຊາການ, ການຊ່ວຍເຫຼືອເປັນຄັ້ງຄາວດ້ານວັດຖຸ, ການຊ່ວຍເຫຼືອດ້ານມະນຸດສະທໍາ ແລະ ການຊ່ວຍເຫຼືອສຸກເສີນຕ່າງໆ ຈາກບັນດາສະຖາບັນການເງິນສາກົນ, ອົງການຈັດຕັ້ງສາກົນ ຫຼື ບັນດາປະເທດ ໃນຂອບການຮ່ວມມືຫຼາຍຝ່າຍ ຫຼື ສອງຝ່າຍ, ທີ່ມີເປົ້າໝາຍສໍາລັບການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແລະ ລຶບລ້າງຄວາມທຸກຍາກ, ແມ່ນປະຕິບັດດັ່ງນີ້:

ກ) ກົມການເງິນຕ່າງປະເທດ ແລະ ຄຸ້ມຄອງໜີ້ສິນ ສືບຕໍ່ເປັນຜູ້ຄົ້ນຄວ້າສະເໜີການຂໍອະນຸມັດນຳເຂົ້າ ແລະ ສະເໜີຍົກເວັ້ນພາສີ-ອາກອນ ຕໍ່ລັດຖະມົນຕີກະຊວງການເງິນ, ຕາມການມອບໂອນຈາກກະຊວງແຜນການ ແລະ ການລົງທຶນ ໃນແຈ້ງການສະບັບເລກທີ 1881/ຜທ.ຣມສ.02, ລົງວັນທີ 11 ສິງຫາ 2016 ແລະ ຕາມທີ່ກຳນົດໃນເອກະສານ ດັ່ງລຸ່ມນີ້:

- ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍລະບຽບການຄຸ້ມຄອງການເງິນສຳລັບທຶນ ຊກພ ສະບັບເລກທີ 2695/ກງ, ລົງວັນທີ 1 ພະຈິກ 2010;
- ຄຳແນະນຳຂອງລັດຖະມົນຕີ ວ່າດ້ວຍການປະຕິບັດນະໂຍບາຍພາສີ-ອາກອນ ສຳລັບການນຳເຂົ້າວັດຖຸ, ອຸປະກອນ ແລະ ພາຫະນະຕ່າງໆຂອງແຜນງານ/ໂຄງການ ທີ່ນຳໃຊ້ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າຈາກຕ່າງປະເທດ ສະບັບເລກທີ 2560/ກງ, ລົງວັນທີ 9 ສິງຫາ 2016.

ຂ) ພາຍຫຼັງລັດຖະມົນຕີກະຊວງການເງິນອອກຂໍ້ຕົກລົງອະນຸມັດການນຳເຂົ້າ, ຈະບໍ່ມີການຢັ້ງຢືນການນຳເຂົ້າ ແລະ ແຫຼ່ງທຶນຄືນອີກ. ມອບໃຫ້ກົມພາສີ ເປັນຜູ້ດຳເນີນການຄຸ້ມຄອງການນຳເຂົ້າສິນຄ້າເຄື່ອງຂອງດັ່ງກ່າວ ແລະ ຕັດແຜນການນຳເຂົ້າຕົວຈິງ ຕາມການອະນຸມັດໃນຂໍ້ຕົກລົງຂອງລັດຖະມົນຕີ. ຈາກນັ້ນ, ໃຫ້ສະຫຼຸບລາຍງານການນຳເຂົ້າສິນຄ້າເຄື່ອງຂອງດັ່ງກ່າວໃຫ້ ການນຳກະຊວງການເງິນ ແລະ ພາກສ່ວນກ່ຽວຂ້ອງ ຕາມພາລະບົດບາດທີ່ໄດ້ກຳນົດ ເພື່ອຮັບຊາບໃນແຕ່ລະໄລຍະ.

2. ສຳລັບການຊ່ວຍເຫຼືອສະເພາະ ລະຫວ່າງບຸກຄົນ ຫຼື ນິຕິບຸກຄົນ ແລະ ການຊ່ວຍເຫຼືອທີ່ບໍ່ນອນຢູ່ໃນຂໍ້ 1 ຂ້າງເທິງ ແມ່ນໃຫ້ສະເໜີກົມພາສີ ພິຈາລະນາດຳເນີນໂດຍກົງ ຕາມລະບຽບການ ແລະ ຂັ້ນຕອນ ທີ່ໄດ້ກຳນົດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີກະຊວງການເງິນ

ບຸນໂຈມ ອຸບົນປະເສີດ